ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ ..03220......../ກພສ

ນະຄອນຫລວງວຽງຈັນ,ວັນທີ 15 ກໍລະກົດ 2020

## ແຈ້ງການ

ເຖິງ: **ຫົວໜ້າກອງຄຸ້ມຄອງພາສີ I-VII.**

**ຫົວໜ້າດ່ານພາສີສາກົນໃນຂອບເຂດທົ່ວປະເທດ.**

ເລື່ອງ: ແນະນຳກ່ຽວກັບການຈັດຕັ້ງປະຕິບັດ ແຈ້ງການຂອງຫ້ອງການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 749/ຫສນຍ, ລົງວັນທີ 30/04/2019

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20/12/2011;
- ອີງຕາມ ແຈ້ງການຂອງຫ້ອງການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 749/ຫສນຍ, ລົງວັນທີ 30/04/2019;
- ອີງຕາມ ແຈ້ງການຂອງຫ້ອງການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1783/ຫສນຍ, ລົງວັນທີ 08/10/2019;
- ອີງຕາມ ທິດຊີ້ນຳຂອງທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ຄັ້ງວັນທີ 11/03/2020.
- ອີງຕາມ ບົດບັນທຶກປຶກສາຫາລື ກ່ຽວກັບການນຳເຂົ້າ ເສດປລາສະຕິກ ຄັ້ງວັນທີ 07/07/2020.

## ກົມພາສີອອກແຈ້ງການ:

1. ກົມພາສີແຈ້ງມາຍັງໃຫ້ຫົວໜ້າກອງຄຸ້ມຄອງພາສີ I- VII ແລະຫົວໜ້າດ່ານ ພາສີສາກົນໃນຂອບເຂດທົ່ວປະເທດ ຊາບວ່າ: ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໄດ້ອອກແຈ້ງການ ສະບັບເລກທີ 749/ຫສນຍ, ລົງວັນທີ 30/04/2019 ສຳລັບ ກິດຈະການອຸດສາຫະກຳນຳໃຊ້ຂີ້ເຫຍື້ອເກົ່າ ແລະກິດຈະການຢາສູບ ແມ່ນບໍ່ເຫັນດີໃຫ້ການສະໜັບສະໜູນດ້ານນະໂຍບາຍພາສີ, ໃຫ້ບໍລິສັດປະຕິບັດຕາມກົດໝາຍກ່ຽວຂ້ອງ ແລະ ສະບັບເລກທີ 1783/ຫສນຍ, ລົງວັນທີ 08/10/ 2019 ບໍ່ເຫັນດີໃຫ້ນະໂຍບາຍ ການນຳເຂົ້າເສດຂີ້ເຫຍື້ອດັ່ງກ່າວ ຂອງບໍລິສັດ ລາວ-ຈີນ ກິດຈະການຢາງ ຈຳກັດຜູ້ດຽວ, ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຫ້າມ ການນຳເຂົ້າເສດຂີ້ເຫຍື້ອຈາກຕ່າງປະເທດ ໃນຮູບການນຳເຂົ້າໂດຍການເສຍພາສີ-ອາກອນ ຕາມກົດໝາຍ ຫລືຂໍນຳເຂົ້າໂດຍການຂໍນະໂຍບາຍດ້ານພາສີ-ອາກອນ ແລະ ທິດຊີ້ນຳຂອງທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ຄັ້ງວັນທີ 11/03/2020 "ເຫັນດີໃຫ້ປະຕິບັດຕາມແຈ້ງການຂອງ ຫສນຍ ໃຫ້ເສຍພາສີ-ອາກອນ ຕາມກົດໝາຍ"
2. ໃນໄລຍະລໍຖ້າກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການຜັນຂະຫຍາຍແຈ້ງການ ສະບັບເລກທີ 1783/ຫສນຍ, ລົງວັນທີ 08/10/2019. ມອບຄວາມຮັບຜິດຊອບໃຫ້ບັນດາດ່ານພາສີສາກົນໃນຂອບເຂດທົ່ວປະເທດ ໃນການກວດກາ, ຄຸ້ມຄອງ ການນຳເຂົ້າໃບຢາສູບ, ຂີ້ເຫຍື້ອເກົ່າ (ເສດປລາສະຕິກ), ວັດຖຸປະກອບ, ເຄື່ອງຈັກ, ພາຫະນະ (ທີ່ລະບຸໃນແຜນຄວາມຕ້ອງການ ອ.3) ແມ່ນໃຫ້ຈັດຕັ້ງປະຕິບັດຕາມແຈ້ງການຂອງຫ້ອງການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 749/ຫສນຍ, ລົງວັນທີ 30/04/2019 ຢ່າງເຂັ້ມງວດ ໂດຍການຮັບແຈ້ງເສຍ

ພາສີ-ອາກອນນຳເຂົ້າ (IM4) ຕາມຈຳນວນທີ່ໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງ (ໃບອະນຸຍາດນຳເຂົ້າຂອງກົມອຸດສາຫະກຳ ແລະ ຫັດຖະກຳ ຢ່າງຖືກຕ້ອງ).

3. ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າພົບບັນຫາ ຫລື ຂໍ້ຫຍຸ້ງຍາກໃຫ້ລາຍງານກົມພາສີ (ພະແນກຄຸ້ມຄອງການຍົກເວັ້ນພາສີ ແລະ ງົດເກັບພາສີ) ເພື່ອມີວິທີການແກ້ໄຂຕາມລະບຽບການ;
4. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຫຼື ຈົນກວ່າຈະມີແຈ້ງການສະບັບໃໝ່ລົບລ້າງ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມພາສີ

ກະຊວງ ການເງິນ

ກົມພາສີ

ພູເຂົາຄຳ ວັນນະວົງໄຊ

**ບ່ອນສົ່ງ:**

- ກອງຄຸ້ມຄອງພາສີ I-VII 01 ສະບັບ "ເພື່ອຈັດຕັ້ງປະຕິບັດ"
- ດ່ານພາສີສາກົນໃນຂອບເຂດທົ່ວປະເທດ 01 ສະບັບ "ເພື່ອຈັດຕັ້ງປະຕິບັດ"
- ສຳເນົາເກັບມ້ຽນ 01 ສະບັບ